**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ກົມທາງລົດໄຟ                                                                                    ເລກທີ 7699 /ກທຟ

ນະຄອນຫຼວງວຽງຈັນ, ວັນທີ 31 ມີນາ 2026

## ໜັງສືແຈ້ງເຊີນປະມູນ

1. ກົມທາງລົດໄຟ ກະຊວງ ໂຍທາທິການ ແລະ ຂົນສົ່ງ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເຫມາະສົມ ເຂົ້າຍື່ນຊອງປະມູນ ສໍາລັບການ ສ້ອມແປງ ແລະ ປ່ຽນລາງລົດໄຟ, ລະບົບສັນຍານ ແລະ ເຄື່ອງມືຮັບໃຊ້ໃນການບໍາລຸງຮັກສາທາງລົດໄຟ ຄວາມຍາວ 249,6 ແມັດ, ໂດຍນໍາໃຊ້ງົບປະມານລົງທຶນຂອງລັດ ໄລຍະການສ້ອມແປງແມ່ນພາຍໃນ 24 ເດືອນ.
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການ ຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາ ກ່ຽວກັບ ການຈັດຕັ້ງປະຕິບັດກົດຫມາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸທິເຫມາະສົມ, ມີໃບອະນຸຍາດດໍາເນີນທຸລະກິດ ຖືກຕ້ອງຕາມກົດຫມາຍ ທີ່ກ່ຽວພັນກັບການສ້ອມແປງດັ່ງກ່າວ. ບໍລິສັດທີ່ມີຄຸນນະວຸທິເຫມາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ກົມທາງລົດໄຟ ກະຊວງໂຍທາທິການ ແລະ ຂົນສົ່ງໃນໂມງລັດຖະການ.
4. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ຕ້ອງຍືນຫນັງສືສະເໜີຫາ ທີ່ຢູ່ຂ້າງລຸ່ມນີ້, ເລີ້ມແຕ່ ວັນທີ 01 ເມສາ 2026 ເປັນຕົ້ນໄປ, ໃນລາຄາ: 5,000,000 ກີບ/ຊອງ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ, ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ.
5. ຊອງປະມູນຕ້ອງສົ່ງທີ່ຢູ່ລຸ່ມນີ້, ໃນເວລາ ຫລື ກ່ອນເວລາ 09:30 ໂມງ ໃນວັນທີ 06 ພຶດສະພາ 2026, ທີ່ຫ້ອງປະຊຸມຊັ້ນ 2 ຂອງ ກົມທາງລົດໄຟ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ການົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 09:30 ໂມງຂອງວັນທີ 06 ພຶດສະພາ 2026ທີ່ຫ້ອງປະຊຸມຊັ້ນ 2 ຂອງ ກົມທາງລົດໄຟ ໂດຍ ຊ້ອງໜ້າຄະນະກາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈ ເຂົ້າຮ່ວມນໍາຕາມສະຖານທີ່ຂ້າງລຸ່ມນີ້.
6. ທຸກໆຊອງປະມູນຕ້ອງໄດ້ ມີຫນັງສືຄໍ້າປະກັນການປະມູນດ້ວຍເງິນສົດ ຫລື ຫນັງສືຄໍ້າປະກັນການປະມູນອອກໂດຍທະນາຄານ ບໍ່ໃຫ້ຫລຸດ 2% ຂອງລາຄາສະເຫນີເຂົ້າປະມູນ.
7. ທີ່ຢູ່ ກົມທາງລົດໄຟ ກະຊວງໂຍທາທິການ ແລະ ຂົນສົ່ງ, ບ້ານ ຄໍາສະຫວາດ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ (ພະແນກຈັດຕັ້ງ-ບໍລິຫານ ແລະ ແຜນການ ຊັ້ນ 2 ເບີໂທ 020 23333050, 020 22236336).

ຫົວໜ້າກົມ

ຫີນເພັດ ຫຼ້າຄອນວົງ

ໝາຍເຫດ:

ລາຍລະອຽດສອບຖາມເພີ່ມເຕີມ ພະແນກຈັດຕັ້ງ-ບໍລິຫານ ແລະ ແຜນການ

020 23333050 ນາງ ສຸພາວັນ ໄຊຍະວົງ ຮອງຫົວໜ້າພະແນກຈັດຕັ້ງບໍລິຫານ ແລະ ແຜນການ

020 22236336 ທ່ານ ອານິດຕ້າ ສີສະໜຸດ ຮອງຫົວໜ້າພະແນກວິສະວະກໍາ